ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 10 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 31 ມີນາ 2017


ສຳນັກງານ ຄຄຊ

ຮັບເຂົ້າ ເລກທີ 0372

ວັນທີ 04 APR 2017

ໂທລະສັບ 021 217770


ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 13-17/03/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

- ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,50% ທຽບເງິນເອີໂຣ ເນື່ອງຈາກຕົວເລກຜົນຜະລິດອຸດສາຫະກຳໃນຂົງເຂດເອີຣົບໃນເດືອນ ມັງກອນ ເພີ່ມຂຶ້ນ 0,9% ຈາກການຫຼຸດລົງ 1,2% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 06-10/03/2017 | ອາທິດນີ້ 13-17/03/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0613 | 1,0775 | -1,50% |
| ໂດລາ/ເຢນ | 115,35 | 113,33 | 1,78% |
| ໂດລາ/ບາດ | 35,40 | 34,90 | 1,43% |
| ໂດລາ/ເປໂຊ | 50,26 | 50,15 | 0,21% |
| ໂດລາ/ຣູເປັຍ | 13.378,0 | 13.342,0 | 0,27% |
| ໂດລາ/ໂດລາສິງກະໂປ | 1,4173 | 1,4027 | 1,04% |
| ໂດລາ/ຢວນ | 6,9162 | 6,9030 | 0,19% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 2,01% ຈາກ 51,17 ໂດລາ/ບາເຣວ ມາເປັນ 50,14 ໂດລາ/ບາເຣວເນື່ອງຈາກ ຄັງສຳຮອງນ້ຳມັນຂອງກຸ່ມ OPEC ໃນເດືອນ 1/2017 ເພີ່ມຂຶ້ນສູງສຸດໃນຮອບ 5 ປີ ເປັນ 278 ລ້ານບາເຣວ. ສ່ວນລາຄາຄຳ ເພີ່ມຂຶ້ນ 2,50% ຈາກ 1.196,53 ໂດລາ/ອອນເປັນ 1.226,49 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ເພີ່ມການຖືຄອງ

ຄຳ ແລະ ສັນຍາຊື້-ຂາຍຄຳ ຂຶ້ນອີກ 9,77 ໂຕນ ເປັນ 834,99 ໂຕນ ໃນວັນທີ 10/3/2017 ຈາກ 825,22 ໂຕນ ໃນວັນທີ 07/3/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,03% ແຕ່ອ່ອນຄ່າ 1,16% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 1,84% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 4,01% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 06-10/03/2017 | | | ອາທິດນີ້ 13-17/03/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.318,43 | 8.354,98 | 8.332,65 | 8.310,41 | 8.352,97 | 8.330,40 | 0,10% | 0,02% | 0,03% | -1,91% | -1,74% | -1,84% |
| ບາດ | 234,63 | 235,86 | 235,40 | 237,40 | 238,59 | 238,15 | -1,17% | -1,14% | -1,16% | -4,10% | -4,03% | -4,01% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,98% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,33%;
- ປະລິມານເງິນ M2 ຫຼຸດລົງ 0,84% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,82%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (10-16/03/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 45,60 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 64,46 ລ້ານໂດລາ ແລະ ຂາຍໂດລາໄດ້ 18,86 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.846,33 ລ້ານບາດ (ໃນນີ້ ຊື້ບາດໄດ້ 111,12 ລ້ານບາດ ແລະ ຂາຍບາດໄດ້ 1.957,45 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາເພີ່ມຂຶ້ນ 21,85% ແລະເງິນບາດເພີ່ມຂຶ້ນ 1,79%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 2,30 ລ້ານໂດລາ. ສ່ວນເງິນບາດແມ່ນບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 5,15 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 134,60 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 03-09/3/2017 | | ອາທິດທີ 10-16/3/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **57,35** | **129,40** | **64,46** | **111,12** | **12,40%** | **-14,13%** |
| - ທ/ຄທຸລະກິດລັດ | 7,93 | 55,90 | 10,51 | 78,45 | 32,53% | 40,34% |
| - ທ/ຄທຸລະກິດອື່ນໆ | 49,42 | 73,50 | 53,95 | 32,67 | 9,17% | -55,55% |
| 2. ການຂາຍເງິນຕາຕ່າງປະເທດ | **11,03** | **1.902,84** | **18,86** | **1.957,45** | **70,99%** | **2,87%** |
| - ທ/ຄທຸລະກິດລັດ | 5,77 | 76,11 | 10,38 | 96,31 | 79,90% | 26,54% |
| - ທ/ຄທຸລະກິດອື່ນໆ | 5,26 | 1.826,73 | 8,48 | 1.861,14 | 61,22% | 1,88% |
| ຊື້-ຂາຍສຸດທິ ທທກ | **46,32** | **-1.773,44** | **45,60** | **-1.846,33** | **-1,55%** | **4,11%** |
| - ຜິດດ່ຽງ ຊື້-ຂາຍ | 80,77% | -1.370,51% | 70,74% | -1661,56% | -12,41% | 21,24% |
| - ມູນຄ່າການຊື້-ຂາຍ | **68,38** | **2.032,24** | **83,32** | **2.068,57** | **21,85%** | **1,79%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-1,25** | **0,00** | **2,30** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 2,30 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,25 | 0,00 | 0,00 | 0,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,81** | **64,04** | **5,15** | **134,60** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0** | **0** | **0** | **0** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0 | 0 | 0 | 0 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0 | 0 | 0 | 0 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 02/2017 ຢູ່ໃນລະດັບ 1,67% ຫຼຸດລົງຈາກ 2,27% ໃນເດືອນ 01/2016.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 219% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 131,51 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 986 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 414 ສະບັບ ເທົ່າກັບ 72,37% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 367,88 ຕື້ກີບ ເພີ່ມຂຶ້ນ 163,70 ຕື້ກີບ ເທົ່າກັບ 80,17% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/3/2017) ມີທັງໝົດ 2.944 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.827 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈາກ 888,36 ຕື້ກີບ ມາເປັນ 1.185,43 ຕື້ກີບ ເທົ່າກັບ 299,04%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 117 ຄັ້ງ, ມູນຄ່າການໂອນ 163,78 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.110,24 ຈຸດ ເພີ່ມຂຶ້ນ 3% ເມື່ອທຽບໃສ່ອາທິດຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 121.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 579,45 ລ້ານກີບ ຫຼຸດລົງ 38,26% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 64,05% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **06-10/03/2017** | ດັດຊະນີອາທິດທີ **13-17/3/2017** | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.112,53 | 1.110,24 | 3% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 60.900 | 338.005.000 | 5.550 | 18.500 | 103.595.000 | 5.600 | -69,62 | -69,35 | 50 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 73.800 | 392.460.000 | 5.318 | 65.900 | 362.050.000 | 5.494 | -10,70 | -7,75 | 176 |
| ບໍລິສັດລາວເວີນ ມະຫາຊົນ | 3.500 | 30.250.000 | 8.643 | 0 | 0 | 9.100 | -100,00 | -100,00 | 457 |
| ບໍລິສັດປີໂຕລ້ຽມເທລດ ດິ້ງລາວ ມະຫາຊົນ | 0 | 0 | 2.300 | 300 | 660.000 | 2.300 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 57.700 | 177.820.000 | 3.082 | 36.500 | 113.150.000 | 3.100 | -36,74 | -36,37 | 18 |
| ທັງໝົດ | 195.900 | 938.535.000 | 4.791 | **121.200** | **579.455.000** | 4.781 | -38,13 | -38,26 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມຮ່ວມກັນລະຫວ່າງ ທຫລ ກັບ ຫ້ອງວ່າການສູນກາງພັກ ທີ່(ທຫລ); ❷ ກອງປະຊຸມສຳມະນາທາງດ້ານວິຊາການກ່ຽວກັບການຈັດຕັ້ງປະຕິບັດການພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ທີ່(ທຫລ); ❸ ກອງປະຊຸມເປີດກວ້າງກັບບັນດາທະນາຄານທຸລະກິດ ແລະສະຖາບັນການເງິນກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງການເງິນ; ❹ ກອງປະຊຸມສຳມະນາກ່ຽວກັບການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃນການປ້ອງກັນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❺ ກອງປະຊຸມເຜີຍແຜ່ ກ່ຽວກັບ ຄວາມຮູ້ພື້ນຖານທາງດ້ານການຄຸ້ມຄອງສະຖາບັນການເງິນ ທີ່ ເມືອງ ສີສັດຕະນາກ ໃນວັນທີ 15 ມີນາ 2017; ❻ ກອງປະຊຸມສຳມະນາເຜີຍແຜ່ຂໍ້ຕົກລົງຂອງ ຄຄຊ ກ່ຽວກັບຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ແລະ ຂໍ້ຕົກລົງວ່າດ້ວຍລາຍການທີ່ຕິດພັນ ໃຫ້ແກ່ພະນັກງານບໍລິສັດໄຟຟ້າລາວມະຫາຊົນໃນວັນທີ 9 ມີນາ 2017 ທີ່ບໍລິສັດໄຟຟ້າລາວມະຫາຊົນ;

- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຄະນະລັດຖະບານ ປະຈຳເດືອນ ມີນາ 2017 ທີ່ (ຫສນຍ); ❷ ກອງປະຊຸມສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການກະກຽມແຜນດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ສະພາປະຊາຊົນຂັ້ນແຂວງ ຊຸດທີ I ທີ່(ສະພາແຫ່ງຊາດ); ❸ ກອງປະຊຸມສະຫຼຸບວຽກງານ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ເມືອງ ຫີນເຫີບ ປະຈຳປີ 2016 ໃນວັນທີ 15 ມີນາ 2017; ❹ ກອງປະຊຸມສຳມະນາໃນຫົວຂໍ້ "ການພັດທະນາທັກສະການເປັນຜູ້ນຳ" ໃນລະຫວ່າງວັນທີ 13-16 ມີນາ 2017; ❺ ກອງປະຊຸມສຳມະນາ "ຫຼັກການກ່ຽວກັບການບໍລິຫານດ້ານການເງິນດິຈິຕ່ອນ" ໃນວັນທີ 9 ມີນາ 2017;
- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ຜູ້ອຳນວຍການບໍລິສັດຢູ່ນຽນເພ (Union pay).

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ຄະນະສືບຕໍ່ລົງຕິດຕາມການປະຕິບັດມາດຕະການຊົ່ວຄາວ ທີ່ ທະນາຄານ ພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ ແລະ ລົງກວດກາ ທະນາຄານຮ່ວມທຸລະກິດລາວ-ຫວຽດ;
- ສືບຕໍ່ຄົ້ນຄວ້າການສະເໜີຂອງທະນາຄານທຸລະກິດ ກ່ຽວກັບການປະກອບທຶນຈົດທະບຽນ, ການຂໍອະນຸຍາດປ່ອຍສິນເຊື່ອເກີນຂອບເຂດທີ່ ທຫລ ກຳນົດ, ຂໍອະນຸຍາດປ່ອຍກູ້ໃຫ້ແກ່ລູກຄ້າລາຍໃຫຍ່, ຂໍອະນຸຍາດແຈກໂຊກ-ລາງວັນ, ຂໍອະນຸຍາດນຳໃຊ້ທຶນຈົດທະບຽນ ແລະ ຂໍອະນຸຍາດກູ້ຢືມເງິນຈາກຕ່າງປະເທດ;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມສຳມະນາຮ່ວມກັນລະຫວ່າງ ທຫລ ກັບ ທະນາຄານປະຊາຊົນຈີນ ກ່ຽວກັບຫົວຂໍ້ "ລະບົບຊຳລະສະສາງ" ແລະ "ການຄຸ້ມຄອງເງິນຕາຕ່າງປະເທດ" ໃນລະຫວ່າງວັນທີ 20-23 ມີນາ 2017; ❷ ກອງປະຊຸມສຳມະນາຮ່ວມກັນລະຫວ່າງ ທຫລ ກັບ ສະຖາບັນພັດທະນາຊັບພະຍາກອນມະນຸດ ໃນຫົວຂໍ້ "ການບໍລິຫານບຸກຄະລາກອນ" ໃນລະວັນທີ 20-24 ມີນາ 2017 ທີ່ (ສູນຮ່ວມມືລາວ-ຍີ່ປຸ່ນ);
- **ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມການກະກຽມດຳເນີນກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 4 ສະໄໝທີ X ທີ່(ຫ້ອງວ່າການສູນກາງພັກ ຫຼັກ 6); ❷ ກອງປະຊຸມບໍເອົາອາຊີ (Boao Forum for Asia) ແລະ ທັດສະນະສຶກສາຢູ່ ສປ ຈີນ ໃນລະຫວ່າງວັນທີ 23 ມີນາ ຫາ 02 ເມສາ 2017; ❸ .

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພັດສະຖາພອນ ແກ້ວວົງວິຈິດ